# ການປະຕິບັດສົນທິສັນຍາສາກົນ ຈະຕ້ອງຮັບໃຊ້ຜົນປະໂຫຍດຂອງຊາດ

*(ຂປລ): ໂຄງການກົດໝາຍສາກົນ ກົມສົນທິສັນຍາ ແລະ ກົດໝາຍ, ກະຊວງການຕ່າງປະເທດ ໄດ້ຈັດຕັ້ງການສຳມະນາ ເພື່ອທົບທວນຄືນເນື້ອໃນ, ຂໍ້ບັນຍັດຂອງສົນທິສັນຍາວ່າດ້ວຍສິດທິທາງດ້ານເສດຖະກິດສັງຄົມແລະວັດທະນະທຳ ເພື່ອໃຫ້ມີຄວາມເຂົ້າໃຈຢ່າງເປັນເອກະພາບກ່ຽວກັບຂໍ້ບັນຍັດພື້ນຖານ, ພັນທະຂອງລັດພາຄີ ແລະ ຂໍ້ຮຽກຮ້ອງຕ່າງໆພ້ອມທັງສັງເກດຄືນໂດຍລວມກ່ຽວກັບການຈັດຕັ້ງປະຕິບັດມາດຕາຕ່າງໆຂອງສົນທິສັນຍາດັ່ງກ່າວຢູ່ແຕ່ລະຂະແໜງການທີ່ກ່ຽວຂ້ອງນັບແຕ່ສົນທິສັນຍາມີຜົນບັງຄັບໃຊ້ສຳລັບ ສປປ ລາວ ຄືນັບແຕ່ເດືອນພຶດສະພາ 2007 ມາຮອດປະຈຸບັນ ແລະ ການກະກຽມສຳລັບການສ້າງບົດລາຍງານແຫ່ງຊາດຂອງ ສປປ ລາວ ສະບັບທຳອິດ ☞ ອ່ານຕໍ່ໜ້າ 2

**ການປະຕິບັດ...**

ເຊິ່ງມີກຳນົດສົ່ງໄປຍັງຄະນະກຳມະການວ່າດ້ວຍສິດທິທາງດ້ານເສດຖະກິດ, ສັງຄົມ ແລະວັດທະນະທຳຂອງອົງ ການ ສະຫະປະຊາຊາດໃນເດືອນມິຖຸນາ 2009.

ທ່ານ ຄຳເຄື່ອງ ບຸນເຕີມ, ຫົວໜ້າກົມສົນທິສັນຍາ ແລະ ກົດໝາຍໄດ້ກ່າວຕໍ່ກອງປະຊຸມສຳມະນາກ່ຽວກັບສົນທິສັນຍາດັ່ງກ່າວ ໃນວັນທີ 19 ກັນຍາ 2008 ຢູ່ທີ່ສູນ ICTC, ນະຄອນຫລວງວຽງຈັນ ວ່າ: ສປປ ລາວ ໄດ້ໃຫ້ສັດຕະຍາບັນສົນທິສັນຍາສາກົນວ່າດ້ວຍສິດທິ ທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ, ສ່ວນສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ສິດທິພົນລະເມືອງແມ່ນພວມຢູ່ໃນຂັ້ນຕອນພິຈາລະນາຂອງສະພາແຫ່ງຊາດ. ໃນການໃຫ້ສັດຕະຍາບັນສົນທິສັນຍາສາກົນ, ສປປ ລາວ ຄຳນຶງເຖິງຄວາມສາມາດໃນການຈັດຕັ້ງປະຕິບັດສົນທິສັນຍາດັ່ງກ່າວລວມທັງການລາຍງານໃນນັ້ນການປະຕິບັດສົນທິສັນຍາສາກົນຈະຕ້ອງຮັບໃຊ້ຜົນປະໂຫຍດຂອງຊາດ ແລະ ປະຊາຊົນລາວບັນດາເຜົ່າ.ສົນທິສັນຍາສາກົນວ່າດ້ວຍສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳສະບັບນີ້ແມ່ນສົນທິສັນຍາທີ່ສອດຄ່ອງກັບນະໂຍບາຍຂອງລັດຖະບານແຫ່ງ ສປປ ລາວ

ຂອງລັດຖະບານແຫ່ງ ສປປ ລາວ

ໃນການສ້າງໃຫ້ປະເທດຊາດຮຸ່ງເຮືອງ ແລະ ສີວິໄລນຳເອົາຄວາມສົມບູນພູນສຸກມາສູ່ປະຊາຊົນບັນດາເຜົ່າໂດຍບໍ່ມີການຈຳແນກ ເຊິ່ງຈະເປັນເງື່ອນໄຂເຮັດໃຫ້ປະຊາຊົນລາວທຸກຄົນໄດ້ຮັບບັນດາສິດທິທີ່ໄດ້ກຳນົດໄວ້ໃນສົນທິສັນຍາສະບັບນີ້. ການປະຕິບັດສົນທິສັນຍາດັ່ງກ່າວແມ່ນຕິດພັນກັບການປະຕິບັດນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍທີ່ກ່ຽວຂ້ອງ, ການປະຕິບັດແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ, ການລົບລ້າງຄວາມທຸກຍາກກໍຄື ການປະຕິບັດໃຫ້ບັນລຸບັນດາຈຸດໝາຍສູ່ຊົນຂອງເປົ້າໝາຍສະຫັດສະວັດດ້ານການພັດທະນາ.ການຈັດຕັ້ງສຳມະນາກ່ຽວກັບສົນທິສັນຍາດັ່ງກ່າວເປັນສ່ວນໜຶ່ງຂອງກິດຈະກຳສະເຫລີມ ສະຫລອງ ຄົບຮອບ 60 ປີ ຂອງຖະແຫລງການວ່າດ້ວຍສິດທິມະນຸດ. ເນື້ອໃນສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳພາຍໃຕ້ສົນທິສັນຍາວ່າດ້ວຍສິດທິທາງດ້ານເສດຖະກິດ, ສັງຄົມແລະ ວັດທະນາທຳນັ້ນແມ່ນຖືກຜັນຂະຫຍາຍມາດຕາທີ່ກ່ຽວຂ້ອງຖະແຫລງການດັ່ງກ່າວໃຫ້ເປັນອັນລະອຽດແລະມີຜົນບັງຄັບໃຊ້ທາງດ້ານກົດໝາຍ.

ສປປ ລາວ ໃຫ້ສັດຕະຍາບັນສົນທິສັນຍາວ່າດ້ວຍສິດທິມະນຸດຫຼາຍສະບັບ. ສົນທິສັນຍາ ສາກົນພື້ນຖານດ້ານສິດທິມະນຸດສອງສະບັບຄື: ສົນທິສັນຍາສາກົນວ່າດ້ວຍສິດທິທາງດ້ານການເມືອງ ແລະ ສິດທິພົນລະເມືອງ ແລະ ສົນທິສັນຍາສາກົນວ່າດ້ວຍສິດທິດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳບວກໃສ່ກັບຖະແຫຼງການສາກົນວ່າດ້ວຍສິດທິມະນຸດແມ່ນຖືວ່າເປັນກົດບັດແຫ່ງສິດທິຂອງສາກົນ(*international Bill of rights*) ທີ່ມີຄວາມສຳຄັນແກ່ປະເທດຕ່າງໆ. ສປປ ລາວ ລົງນາມໃນສອງສົນທິສັນຍາດັ່ງກ່າວໃນປີ 2000 ແລະ ໃນເດືອນກຸມພາ 2007.

ກອງປະຊຸມສຳມະນາດັ່ງກ່າວໄດ້ຈັດຂຶ້ນ ໂດຍການເປັນປະທານຂອງທ່ານດຣ ບຸນມີ ປັບພະວົງ, ຜູ້ຊ່ວຍລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ, ທ່ານ ຄຳເຄື່ອງ ບຸນເຕີມ, ຫົວໜ້າກົມສົນທິສັນຍາ ແລະ ກົດໝາຍ ກະຊວງການຕ່າງປະເທດ, ທ່ານ *STEPHANE Vigie* ຮອງຜູ້ຕາງໜ້າອົງການສະຫະປະຊາຊາດປະຈຳ ສປປລາວ, ມີບັນດາຕົວແທນຈາກກະຊວງ ແລະ ອົງການຕ່າງໆເຂົ້າຮ່ວມ 60 ກວ່າທ່ານ./

.ຂ່າວວັນ

ປະເທດລາວ, 22 ກັນຍາ 2008